ສົ່ງ: ທ່ານ ຫົວໜ້າສຳນັກງານ ຄຄຊ "ເພື່ອຊາບ".

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-----===000===-----

ທະນາຄານແຫ່ງ ສປປ ລາວ — ເລກທີ 02 /ທຫລ

ນະຄອນຫຼວງວຽງຈັນ, ວັນທີ 20 FEB 2015

ສຳນັກງານ ຄຄຊ
ເລກທີ 198
ວັນທີ 23 FEB 2015
021 217770

# ບົດສະຫຼຸບການເຄື່ອນໄຫວວຽກງານຂອງທະນາຄານແຫ່ງ ສປປ ລາວ ປະຈຳເດືອນ 01/2015 ແລະ ທິດທາງແຜນການໃນຕໍ່ໜ້າ

## ພາກທີ I
## ການເຄື່ອນໄຫວວຽກງານທະນາຄານໃນໄລຍະຜ່ານມາ

### I. ວຽກງານການເມືອງແນວຄິດ

ເອົາໃຈໃສ່ສຶກສາອົບຮົມການເມືອງ-ແນວຄິດໃຫ້ສະມາຊິກພັກ-ພະນັກງານຢ່າງເປັນປົກກະຕິ ດ້ວຍຫຼາຍຮູບການທີ່ເໝາະສົມ; ປະຕິບັດລະບອບການສ່ອງແສງລາຍງານ ແລະ ການດຳເນີນຊີວິດການເມືອງພາຍໃນໜ່ວຍພັກ, ກົມກອງ ແລະ ອົງການຈັດຕັ້ງ ມະຫາຊົນ ປະຈຳເດືອນ ເພື່ອກວດກາຕີລາຄາຄວາມຮັບຜິດຊອບໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານ. ໃນເດືອນຜ່ານມາໄດ້ມີບາງເຫດການພົ້ນເດັ່ນຄື: ❶ສຳເລັດການຈັດກອງປະຊຸມສ່ອງແສງວຽກງານສາຍພັກ ແລະ ວຽກງານສາຍລັດ ປະຈຳເດືອນ 12/2014; ❷ຈັດຕັ້ງພິທີປາຖະກະຖາເຜີຍແຜ່ເອກະສານ ມູນເຊື້ອວັນທີ 20 ມັງກອນ ແລະ ເຜີຍແຜ່ເອກະສານກ່ຽວກັບສື່ສັງຄົມອອນໄລ; ❸ຕິດຕາມເອກະສານທີ່ສະເໜີເຖິງກະຊວງພາຍໃນ ເຊັ່ນ: ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ທຫລ, ການສະເໜີຂໍສ້າງຕັ້ງ ທຫລ ພາກເໜືອ ທີ່ແຂວງຊຽງຂວາງ ແລະ ການປະກອບຄຳເຫັນຕໍ່ຮ່າງພາລະບົດບາດຂອງໜ່ວຍງານຂໍ້ມູນຕ້ານການຟອກເງິນ. ຜ່ານການຈັດຕັ້ງປະຕິບັດຄືດັ່ງກ່າວ ເຮັດໃຫ້ສະພາບການເມືອງແນວຄິດຂອງພະນັກງານພາຍໃນຂະແໜງທະນາຄານມີຄວາມສະຫງົບປົກກະຕິ, ພະນັກງານມີຄວາມອຸ່ນອ່ຽນທຸ່ນທ່ຽງ, ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ, ລະບຽບກົດໝາຍ ແລະ ຕັ້ງໜ້າປະຕິບັດໜ້າທີ່ວຽກງານຕາມທີ່ໄດ້ຮັບມອບໝາຍຢ່າງຕັ້ງໜ້າ ແລະ ເຂັ້ມງວດ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

### II. ວຽກງານທີ່ລັດຖະບານມອບໝາຍໃຫ້

- ສືບຕໍ່ປັບປຸງຮ່າງກົດໝາຍວ່າດ້ວຍການຕ້ານ ແລະ ສະກັດກັ້ນການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ (AML/CFT) ຮ່ວມກັບສະພາແຫ່ງຊາດ;
- ສຳເລັດການນຳສະເໜີຮ່າງກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ຢູ່ກອງປະຊຸມສະພາແຫ່ງຊາດສະໄໝທີ 8;
- ສຳເລັດການສົ່ງຮ່າງແຜນຍຸດທະສາດການພັດທະນາຕະຫຼາດທຶນຂອງ ສປປ ລາວ ແຕ່ປີ 2016-2025 ໃຫ້ແກ່ຫ້ອງວ່າການລັດຖະບານ ເພື່ອອອກດຳລັດຮັບຮອງ.

### III. ວຽກງານພົ້ນເດັ່ນ

- ວຽກງານຄຸ້ມຄອງທະນາຄານທຸລະກິດ ແລະ ສະຖາບັນການເງິນ: ❶ສຳເລັດການອອກໃບອະນຸຍາດປ່ຽນຊື່ຂອງທະນາຄານ CIMB ໄທ ສາຂາວຽງຈັນ ມາເປັນ ທະນາຄານ CIMB ໄທ ຈຳກັດ (ມະຫາຊົນ) ສາຂາວຽງຈັນ; ❷ຄົ້ນຄວ້າປັບປຸງຮ່າງນິຕິກຳບົນພື້ນຖານຄຳເຫັນຂອງຊ່ຽວຊານທະນາຄານໂລກ; ❸ສຳເລັດການສະເໜີສືບຕໍ່ຂໍການຊ່ວຍເຫຼືອທາງດ້ານວິຊາການຈາກທະນາຄານ Standard Chartered ໃນການສຳມະນາກ່ຽວກັບຫຼັກການ Basel 2; ❹ອອກແຈ້ງການກ່ຽວກັບມາດຖານຂອງບໍລິສັດກວດສອບພາຍນອກ (ບໍລິສັດກວດສອບສະຖາບັນການເງິນຈຸລະພາກ) ເພື່ອປະກອບ

ເອກະສານສະໝັກ; ❺ມອບໃບອະນຸຍາດຊົ່ວຄາວໃຫ້ແກ່ບໍລິສັດ ຊັບຄະນາ ເຊົ່າສິນເຊື່ອ ຈຳກັດ, ສະຖາບັນການເງິນຈຸລະພາກທີ່ບໍ່ຮັບຝາກເງິນ ເອສແອນເຄ, ສະຖາບັນການເງິນຈຸລະພາກທີ່ບໍ່ຮັບຝາກເງິນ ໄພສານລ້ານຊ້າງ ແລະ ບໍລິສັດ ບີເອສແຄບ ປິໂຕລາວ ຈຳກັດ; ❻ອອກແຈ້ງການເຖິງບັນດາສະຖາບັນການເງິນໃຫ້ເສຍຄ່າຄຸ້ມຄອງປະຈຳປີ; ❼ສຳເລັດການລົງກວດກາສຸກເສີນ ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ ນິວຕັນ;

- ສຳເລັດການລາຍງານຂັ້ນເທິງກ່ຽວກັບຜົນການກວດກາບໍລິສັດທີ່ເຄື່ອນໄຫວຊື້-ຂາຍຮຸ້ນ ໃນຮູບແບບ E-Trade ຢູ່ ສປປ ລາວ ທີ່ບໍ່ທັນສອດຄ່ອງກັບກົດໝາຍວ່າດ້ວຍຫຼັກຊັບ 4 ແຫ່ງ ຄື: ບໍລິສັດ ລາວແມັກສຄີ ສະເຕໂບ ຈຳກັດຜູ້ດຽວ, ບໍລິສັດ ລາວແມັກສຄີ ສະເຕໂບ 1 ຈຳກັດຜູ້ດຽວ, ບໍລິສັດ ຊິດີທີອັບລາວ ຂາເຂົ້າ-ຂາອອກ ຈຳກັດຜູ້ດຽວ ແລະ ບໍລິສັດ ລາວຄຳ ທີ່ປຶກສາທາງດ້ານການລົງທຶນ ຈຳກັດຜູ້ດຽວ ສາຂານະຄອນຫຼວງວຽງຈັນ;
- ສຳເລັດການແຈ້ງເຖິງທະນາຄານທຸລະກິດ ແລະ ສະຖາບັນການເງິນຈຸລະພາກ ກ່ຽວກັບການພົວພັນທຸລະກິດກັບບັນດາປະເທດ ທີ່ນອນໃນບັນຊີດຳ ແລະ ບັນຊີເທົາຂອງອົງການ FATF;
- ສຳເລັດການຈັດກອງປະຊຸມຕ່າງໆ ດັ່ງນີ້: ❶ກອງປະຊຸມທະວິພາຄີ ລະຫວ່າງ ທຫລ ແລະ ທະນາຄານແຫ່ງຊາດ ສສ. ຫວຽດນາມ (ທຫວ); ❷ກອງປະຊຸມສຳມະນາເຜີຍແຜ່ວຽກງານປະກັນໄພເງິນຝາກ; ❸ກອງປະຊຸມຮ່ວມກັບຊ່ຽວຊານ IMF ເພື່ອພັດທະນາວຽກງານຕະຫຼາດລະຫວ່າງທະນາຄານ (Interbank Market Development); ❹ກອງປະຊຸມປຶກສາຫາລືບັນຫາທີ່ຄົງຄ້າງກ່ຽວກັບຮ່າງກົດໝາຍວ່າດ້ວຍການຕ້ານ ແລະ ສະກັດກັ້ນການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ (AML/CFT) ຮ່ວມກັບສະພາແຫ່ງຊາດ; ❺ກອງປະຊຸມປຶກສາຫາລືກ່ຽວກັບການຜ່ານໂຄງລ້າງ ແລະ ເນື້ອໃນປຶ້ມຄູ່ມືສັງລວມວຽກງານການເຊື່ອມໂຍງຂະແໜງການເງິນ-ເງິນຕາອາຊຽນ;
- ສຳເລັດພິທີເຊັນ MOU ລະຫວ່າງ ສະຖາບັນການທະນາຄານ ແລະ ມະຫາວິທະຍາໄລ Oxbridge ກ່ຽວກັບການສອນພາສາຈີນ 300 ປະໂຫຍກ;
- ສຳເລັດການປະສານກັບທະນາຄານພັດທະນາຈີນ (CDB) ແລະ ຊ່ຽວຊານ Union Pay ກ່ຽວກັບການຈັດຕັ້ງປະຕິບັດໂຄງການນຳໃຊ້ບັດ ATM ຮ່ວມກັນລະຫວ່າງທະນາຄານ ໃນ ສປປ ລາວ (Laos ATM Pools Switching: LAPS);
- ນຳສົ່ງສຳນວນທຸລະກຳທາງດ້ານການເງິນທີ່ສົງໄສວ່າເປັນການຟອກເງິນ ໃຫ້ແກ່ເຈົ້າໜ້າທີ່ສືບສວນ-ສອບສວນ 01 ສະບັບ. ຮອດປັດຈຸບັນທຸລະກຳທີ່ໜ້າສົງໄສວ່າເປັນການຟອກເງິນ (STR) ທັງໝົດມີ 123 ສະບັບ.

## IV. <u>ວຽກງານວິຊາສະເພາະ</u>

### 1. <u>ການຮັກສາສະຖຽນລະພາບເງິນຕາແຫ່ງຊາດ</u>

### 1.1. <u>ສະພາບເສດຖະກິດເງິນຕາສາກົນ</u>

ບໍລິສັດຈັດອັນດັບຄວາມໜ້າເຊື່ອຖື ສະແຕນດາດແອນພົວ (S&P) ປະກາດພິຈາລະນາປັບຫຼຸດອັນດັບຄວາມໜ້າເຊື່ອຖືຂອງປະເທດ ລັດເຊຍ ເນື່ອງຈາກຄວາມຫົດຢືດທາງການເງິນຂອງປະເທດທີ່ກຳລັງຖືກຖອຍລົງຢ່າງໜັກ ເພາະຕ້ອງໃຊ້ເງິນຈຳນວນຫຼາຍໃນການຄ້ຳຈຸນເງິນຣູເບິລໃນໄລຍະຫຼາຍເດືອນຜ່ານມາ ຊຶ່ງປະຈຸບັນອັນດັບຄວາມໜ້າເຊື່ອຖືຂອງສະກຸນເງິນຕ່າງປະເທດຂອງລັດເຊຍຢູ່ໃນລະດັບ BBB ຊຶ່ງເປັນອັນດັບຕ່ຳສຸດໃນກຸ່ມທີ່ໜ້າລົງທຶນ ແລະ ປະຈຸບັນລັດເຊຍມີທຶນສຳຮອງເງິນຕາຕ່າງປະເທດ ແລະ ຄັງສຳຮອງປະມານ 414 ຕື້ໂດລາສະຫະລັດ ຫຼຸດລົງຈາກ 510 ຕື້ໂດລາ. ພ້ອມກັນນັ້ນ, ບັນດາປະເທດທີ່ນຳໃຊ້ສະກຸນເງິນເອີໂຣ (EA) ກຳລັງປະເຊີນກັບບັນຫາພາວະເງິນເຟີ້ ທີ່ສືບຕໍ່ຫຼຸດລົງຢ່າງຕໍ່ເນື່ອງຢູ່ໃນລະດັບ -0,2% ໂດຍສະເພາະອັດຕາເງິນເຟີ້ຂອງປະເທດເຢຍລະມັນ ທີ່ຫຼຸດລົງຢູ່ໃນລະດັບພຽງ 0,1% ແລະ ແອດສະປາຍ -1,1%. ຕໍ່ກັບບັນຫາດັ່ງກ່າວແມ່ນໄດ້ເພີ່ມແຮງກົດດັນໃຫ້ທະນາຄານກາງເອີຣົບ (ECB) ອາດຈຳເປັນຕ້ອງໄດ້ນຳໃຊ້ມາດຕະການຜ່ອນຄາຍ (QE) ເພື່ອກະຕຸ້ນເສດຖະກິດຂອງເອີໂຣໂຊນ ທີ່ກຳລັງສ່ຽງຈະເຂົ້າສູ່ພາວະເງິນຝືດໃນມໍ່ໆນີ້. ໃນຂະນະທີ່, ສູນສະຖິຕິແຫ່ງຊາດຂອງ ສປ.ຈີນ ກໍ່ປະກາດປັບຫຼຸດ ແລະ ຄາດຄະເນອັດຕາການຂະຫຍາຍຕົວທາງດ້ານເສດຖະກິດພາຍໃນປະເທດລົງ ຈາກລະດັບ 7,3% ມາເປັນ 7% ໃນປີ 2015 ເນື່ອງຈາກໄດ້ຮັບຜົນກະທົບຈາກພື້ນຖານເສດຖະກິດທົ່ວໂລກທີ່ຫຼຸດລົງ ເຖິງແມ່ນວ່າອັດຕາເງິນເຟີ້ໃນເດືອນ 12/2014 ຈະເພີ່ມຂຶ້ນກໍຕາມ ແຕ່ກໍ່ຍັງຕ່ຳກວ່າຄາດໝາຍ.

1.2. ການຮັກສາສະຖຽນລະພາບເງິນຕາພາຍໃນ

ໂດຍອີງໃສ່ສະພາບເສດຖະກິດເງິນຕາສາກົນ, ທະນາຄານແຫ່ງ ສປປ ລາວ ໄດ້ກຳນົດນະໂຍບາຍເງິນຕາຂອງຕົນດ້ວຍຄວາມລະມັດລະວັງ ເພື່ອຮັກສາສະຖຽນລະພາບເສດຖະກິດມະຫາພາກໃຫ້ໄດ້ຕາມຄາດໝາຍທີ່ກຳນົດໄວ້. ໂດຍສາມາດຄວບຄຸມອັດຕາເງິນເຟີ້ ແລະ ອັດຕາແລກປ່ຽນ ໃຫ້ຢູ່ໃນລະດັບທີ່ສາມາດຄວບຄຸມໄດ້ດັ່ງລາຍລະອຽດ ລຸ່ມນີ້:

- ຖານເງິນຕາປະຈຳເດືອນ 01/2015 ເພີ່ມຂຶ້ນ 3,94% ທຽບໃສ່ເດືອນຜ່ານມາ. ສາເຫດຕົ້ນຕໍຍ້ອນຮັບໂອນເງິນຈາກຕ່າງປະເທດ ສຸດທິ 555 ລ້ານໂດລາ. ໃນນັ້ນ, ຮັບເງິນໃຫ້ຫົວໜ່ວຍທຸລະກິດ 400 ລ້ານໂດລາ ແລະ ທຫລ ລ່ວງໜ້າໃຫ້ລັດຖະບານ ສຸດທິ 700 ຕື້ກີບ. ໃນຂະນະດຽວກັນ, ຫົວໜ່ວຍທຸລະກິດໄດ້ຊຳລະສິນເຊື່ອໃຫ້ ທຫລ 341 ລ້ານໂດລາ, ຖອນສົດ ສຸດທິ 100 ລ້ານໂດລາ. ຊຶ່ງເຮັດໃຫ້ປະລິມານເງິນ M2 ເພີ່ມຂຶ້ນ 5,16% ທຽບໃສ່ເດືອນຜ່ານມາ.
- ລະພາບອັດຕາແລກປ່ຽນສະເລ່ຍໃນເດືອນ 1/2015 ທຽບໃສ່ເດືອນ 12/2014 ເຫັນວ່າ ສືບຕໍ່ມີສະຖຽນລະພາບເຫັນໄດ້ຈາກເງິນກີບທຽບເງິນໂດລາອ່ອນຄ່າ 0,42% ສຳລັບອັດຕາຂອງ ທທກ ແລະ ອ່ອນຄ່າ 0,40% ສຳລັບອັດຕາຕະຫຼາດ. ສ່ວນເງິນກີບທຽບເງິນບາດ ອ່ອນຄ່າ 0,16% ສຳລັບອັດຕາຂອງ ທທກ ແຕ່ແຂງຄ່າ 0,65% ສຳລັບອັດຕາຕະຫຼາດ.

**(ລາຍລະອຽດໃນ ຕາຕະລາງຄັດຕິດທີ 1)**

ການຊື້-ຂາຍເງິນຕາຕ່າງປະເທດໂດຍລວມ ທທກ ຊື້ເງິນຕາຕ່າງປະເທດສຸດທິ 6,79 ລ້ານໂດລາທຽບເທົ່າ ຫຼຸດລົງ 24,99% ເມື່ອທຽບໃສ່ເດືອນຜ່ານມາ ໃນນີ້: ຊື້ໂດລາສຸດທິ 31,56 ລ້ານໂດລາ ແຕ່ຂາຍບາດສຸດທິ 807,55 ລ້ານບາດ. ສະນັ້ນ, ທຫລ ຈຶ່ງໄດ້ດັດສົມຕະຫຼາດເງິນຕາຕ່າງປະເທດ ດ້ວຍການຊື້ສຸດທິ 4,54 ລ້ານໂດລາທຽບເທົ່າ ໃນນີ້: ຊື້ເງິນໂດລາສຸດທິ 0,80 ລ້ານໂດລາ ແລະ ຊື້ເງິນບາດສຸດທິ 122,01 ລ້ານບາດ.

**(ລາຍລະອຽດໃນ ຕາຕະລາງຄັດຕິດທີ 2)**

- ອັດຕາເງິນເຟີ້ປະຈຳເດືອນ 01/2015 ຄາດວ່າຈະຢູ່ໃນລະດັບ 2,20% ຫຼຸດລົງ 0,20% ຈາກ 2,40% ໃນເດືອນ 12/2014 ຜ່ານມາ;

2. ການລະດົມເງິນຝາກ, ການປ່ອຍສິນເຊື່ອ ແລະ ແກ້ໄຂໜີ້ບໍ່ເກີດດອກອອກຜົນຂອງທະນາຄານທຸລະກິດ

ການລະດົມເງິນຝາກຮອດເດືອນ 01/2015 (ຕົວເລກເບື້ອງຕົ້ນ) ທະນາຄານທຸລະກິດມີຍອດເງິນຝາກທັງໝົດ 46.297,29 ຕື້ກີບ ເພີ່ມຂຶ້ນ 5,30% ເມື່ອທຽບໃສ່ເດືອນຜ່ານມາ. ໃນນີ້, ເງິນຝາກເປັນເງິນກີບ ເພີ່ມຂຶ້ນ 1,62% ກວມເອົາ 49,69% ຂອງຍອດເງິນຝາກທັງໝົດ ແລະ ເງິນຝາກເປັນເງິນຕາຕ່າງປະເທດ ເພີ່ມຂຶ້ນ 9,21% ກວມເອົາ 50,31% ຂອງເງິນຝາກທັງໝົດ.

ການປ່ອຍສິນເຊື່ອຮອດເດືອນ 01/2015 (ຕົວເລກເບື້ອງຕົ້ນ) ຍອດເຫຼືອສິນເຊື່ອທັງໝົດ 41.133,69 ຕື້ກີບ ເພີ່ມຂຶ້ນ 0,61% ເມື່ອທຽບໃສ່ເດືອນຜ່ານມາ. ສິນເຊື່ອເປັນເງິນກີບກວມເອົາ 50,76% ຂອງສິນເຊື່ອທັງໝົດ.

ໃນເດືອນ 01/2015 ທະນາຄານນະໂຍບາຍປ່ອຍສິນເຊື່ອທັງໝົດ 58,66 ຕື້ກີບ ຫຼຸດລົງ 19,93% ເມື່ອທຽບໃສ່ເດືອນຜ່ານມາ. ໃນນີ້: ສິນເຊື່ອ 68 ເມືອງທຸກຍາກ ມີຈຳນວນ 40,32 ຕື້ກີບ, ສິນເຊື່ອ 64 ຈຸດສຸມ ມີຈຳນວນ 5,21 ຕື້ກີບ, ສິນເຊື່ອ 3 ສ້າງ ມີຈຳນວນ 5,13 ຕື້ກີບ ແລະ ເກັບໜີ້ໄດ້ 27,94 ຕື້ກີບ. ສິນເຊື່ອທັງໝົດທີ່ປ່ອຍໄປສ່ວນໃຫຍ່ແມ່ນໄດ້ສຸມໃສ່ຂະແໜງການກະສິກຳ-ປ່າໄມ້, ການຄ້າ ແລະ ປະກອບວັດຖຸເຕັກນິກ. ຍອດສິນເຊື່ອຮອດທ້າຍເດືອນ 01/2015 ມີຈຳນວນ 2.353,24 ຕື້ກີບ ເພີ່ມຂຶ້ນ 1,32% ເມື່ອທຽບໃສ່ເດືອນຜ່ານມາ. ໃນນີ້ ໜີ້ປົກກະຕິ ກວມເອົາ 74,68% ແລະ ໜີ້ກາຍສັນຍາ ກວມເອົາ 25,32% ຂອງຍອດສິນເຊື່ອທັງໝົດ.

ຍອດເຫຼືອໜີ້ຕ້ອງຮັບທວງຍາກ[1] (NPL) ຂອງທະນາຄານທຸລະກິດທົ່ວລະບົບ (ບໍ່ລວມທະນາຄານນະໂຍບາຍ) ຮອດເດືອນ 12/2014 ມີ ຈຳນວນ 2.962,52 ຕື້ກີບ ເພີ່ມຂຶ້ນ 0,02% ເມື່ອທຽບໃສ່ເດືອນຜ່ານມາ ຊຶ່ງກວມເອົາ 5,[illegible]0% ຂອງຍອດເຫຼືອສິນເຊື່ອທັງໝົດ. ສາເຫດທີ່ໜີ້ບໍ່ເກີດດອກອອກຜົນເພີ່ມຂຶ້ນເມື່ອທຽບໃສ່ເດືອນຜ່ານມາ [illegible] ທະນາຄານສົ່ງເສີມກະສິກຳ, ທະນາຄານພັດທະນາລາວ, ທະນາຄານລາວກໍ່ສ້າງ, ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ, ແລະ ທະນາຄານຮ່ວມທຸລະກິດລາວ-ຫວຽດ ມີໜີ້ NPLs ເພີ່ມຂຶ້ນຫຼາຍກວ່າໝູ່.

---

[1] ເດືອນ 1/2014 ຍັງບໍ່ສາມາດລາຍງານໄດ້ ເນື່ອງຈາກລະບົບເກັບກຳຂໍ້ມູນບັງບໍ່ທັນຄົບ

## 3. ການເຄື່ອນໄຫວຊໍາລະສະສາງ ແລະ ການຊື້-ຂາຍພັນທະບັດ

### 3.1. ການເຄື່ອນໄຫວຊໍາລະສະສາງ

ການຊໍາລະສະສາງດ້ວຍແຊັກຜ່ານສູນຊໍາລະສະສາງໃນເດືອນນີ້ມີຈໍານວນ 3.204 ສະບັບ ຫຼຸດລົງ 5,76% ເປັນເງິນຈໍານວນ 2.123,40 ຕື້ກີບ ເພີ່ມຂຶ້ນ 4,85% ເມື່ອທຽບໃສ່ເດືອນຜ່ານມາ. ການໂອນເງິນທາງໂທລະສານແບບມີມູນຄ່າສູງໃນເດືອນນີ້ມີຈໍານວນ 161 ຄັ້ງ ມີມູນຄ່າການໂອນ 631,88 ຕື້ກີບ ເພີ່ມຂຶ້ນ 2,32% ເມື່ອທຽບໃສ່ເດືອນຜ່ານມາ.

ຕິດຕາມການໂອນເງິນຜ່ານລະບົບຊໍາລະສະສາງມູນຄ່າສູງ (RTGS) ແຕ່ວັນທີ 29/12-27/01/2015 ມີການເຄື່ອນໄຫວຈໍານວນ 4.441 ຄັ້ງ ມີມູນຄ່າ 1.896,31 ຕື້ກີບ ເພີ່ມຂຶ້ນ 59,61% ເມື່ອທຽບໃສ່ເດືອນຜ່ານມາ. ທະນາຄານທຸລະກິດທີ່ເຮັດທຸລະກໍາສູງສຸດ ຄື: ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຈໍານວນ 1.464 ຄັ້ງ.

### 3.2 ການຊື້-ຂາຍພັນທະບັດ

ໃນເດືອນ 01/2015 ພັນທະບັດກະຊວງການເງິນບໍ່ມີການເຄື່ອນໄຫວ. ປັດຈຸບັນມີພັນທະບັດທີ່ຍັງບໍ່ທັນຄົບກໍານົດໄຖ່ຖອນທັງໝົດ 5 ບ້ວງ ມີມູນຄ່າ 6.256,39 ຕື້ກີບ ແລະ 70 ລ້ານໂດລາ.

ສໍາລັບພັນທະບັດທະນາຄານແຫ່ງ ສປປ ລາວ ໃນເດືອນ 01/2015 ແມ່ນບໍ່ມີການເຄື່ອນໄຫວ. ຈໍານວນທີ່ຍັງບໍ່ທັນມີການໄຖ່ຖອນ 155,70 ລ້ານໂດລາ.

## 4. ການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ

ດັດຊະນີຕະຫຼາດຫຼັກຊັບລາວ ໃນເດືອນນີ້ ປິດຢູ່ທີ່ 1.413,58 ຈຸດ ເພີ່ມຂຶ້ນ 1,24% ເມື່ອທຽບໃສ່ເດືອນຜ່ານມາ, ຕະຫຼອດເດືອນມີປະລິມານຊື້-ຂາຍຮຸ້ນທັງໝົດ 11,05 ລ້ານຮຸ້ນ ແລະ ມີມູນຄ່າການ ຊື້-ຂາຍ 58,67 ຕື້ກີບ ເພີ່ມຂຶ້ນ 27,44% ທຽບໃສ່ເດືອນຜ່ານມາ. ໂດຍເດືອນນີ້ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 50,29% ຂອງມູນຄ່າການຊື້-ຂາຍທັງໝົດ.

ຮຸ້ນຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ມີລາຄາຊື້-ຂາຍສະເລ່ຍ 6.991 ກີບ/ຮຸ້ນ ຫຼຸດລົງ 106 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 147.374 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 1,03 ຕື້ກີບ ຫຼຸດລົງ 18,07% ເມື່ອທຽບໃສ່ເດືອນຜ່ານມາ. ໂດຍເດືອນນີ້ຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 25,94% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ BCEL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນຢູ່ທີ່ 9,49%.

ຮຸ້ນຂອງບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (EDL-Gen) ມີລາຄາຊື້-ຂາຍສະເລ່ຍ 7.050 ກີບ/ຮຸ້ນ ເພີ່ມຂຶ້ນ 5 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 4,49 ລ້ານຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 31,68 ຕື້ກີບ ເພີ່ມຂຶ້ນ 27,94% ເມື່ອທຽບໃສ່ເດືອນຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍ ກວມເອົາ 56,82% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ EDL-Gen ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 14,21%.

ຮຸ້ນຂອງບໍລິສັດ ລາວເວີນ ມະຫາຊົນ (LWPC) ມີລາຄາຊື້-ຂາຍສະເລ່ຍ 8.139 ກີບ/ຮຸ້ນ ເພີ່ມຂຶ້ນ 202 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 2.567 ຮຸ້ນ ແລະ ມີມູນຄ່າຊື້-ຂາຍ 20,89 ລ້ານກີບ ເພີ່ມຂຶ້ນ 681,12% ທຽບໃສ່ເດືອນຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍ ກວມເອົາ 64,28% ຂອງມູນຄ່າຊື້-ຂາຍຂອງຮຸ້ນ LWPC ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 2,70%.

ຮຸ້ນຂອງບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ (PTL) ມີລາຄາຊື້-ຂາຍສະເລ່ຍ 4.050 ກີບ/ຮຸ້ນ ເພີ່ມຂຶ້ນ 78 ກີບ/ຮຸ້ນ ເມື່ອທຽບໃສ່ປີທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 6,40 ລ້ານຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 25.94 ຕື້ກີບ ເພີ່ມຂຶ້ນ 29,59% ທຽບໃສ່ເດືອນຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍ ກວມເອົາ 49,94% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ PTL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 12,69%.

## V. ດ້ານອ່ອນ ແລະ ຂໍ້ຄົງຄ້າງ

- ການສຶກສາອົບຮົມດ້ານການເມືອງ-ແນວຄິດ ເຖິງແມ່ນໄດ້ດໍາເນີນຢ່າງເປັນປະຈໍາ ແຕ່ກໍ່ຍັງບໍ່ທັນເລິກເຊິ່ງ ແລະ ບໍ່ທັນເປັນປົກກະຕິເທົ່າທີ່ຄວນ, ສ່ວນໃຫຍ່ແມ່ນປະຕິບັດຕາມທິດຊີ້ນໍາລວມຂອງຂັ້ນເທິງ ບວກກັບພະນັກງານສ່ວນໃຫຍ່ຍັງເປັນພະນັກ

ງານໜຸ່ມນ້ອຍ ຈຶ່ງເຮັດໃຫ້ການຄົ້ນຄວ້າເຊື່ອມຊຶມ ບັນດາເອກະສານ, ຂໍ້ກຳນົດ, ກົດລະບຽບ ແລະ ບັນດາກົດໝາຍຕ່າງໆ ຂອງພະນັກງານຈຳນວນໜຶ່ງຍັງບໍ່ທັນເລິກເຊິ່ງ;

- ການປະຕິບັດວຽກງານຕາມແຜນດຳເນີນງານ ປະຈຳປີ 2014 ໃນການກວດກາປົກກະຕິ ແລະ ຈຸດສຸມບາງດ້ານຍັງບໍ່ສາມາດປະຕິບັດໃຫ້ສຳເລັດຕາມແຜນການທີ່ວາງໄວ້ ເນື່ອງຈາກຕ້ອງໄດ້ປະຕິບັດວຽກງານອື່ນທີ່ຮີບດ່ວນ;

- ການສ້າງຂະບວນການຂອງແຕ່ລະອົງການຈັດຕັ້ງ ຍັງບໍ່ຟົດພື້ນເທົ່າທີ່ຄວນ, ການຈັດຕັ້ງຮ່ວມຊີວິດຕາມກົດລະບຽບຂອງແຕ່ລະອົງການຈັດຕັ້ງ ຍັງບໍ່ທັນເປັນປົກກະຕິ.

ເພື່ອແກ້ໄຂບັນດາດ້ານອ່ອນ ແລະ ຂໍ້ຄົງຄ້າງຂ້າງເທິງນັ້ນບັນດາກົມ ແລະ ທຽບເທົ່າກົມພາຍໃນ ທຫລ ຈຶ່ງໄດ້ມີການຈັດຕັ້ງການເຜີຍແຜ່ບັນດາເອກະສານສຳຄັນຕ່າງໆ ເປັນແຕ່ລະໄລຍະ, ຈັດຕັ້ງການນຳພາການເມືອງ-ແນວຄິດແກ່ພະນັກງານທຸກຂັ້ນ, ເອົາໃຈໃສ່ຊີ້ນຳການຈັດຕັ້ງປະຕິບັດວຽກງານດ້ວຍຄວາມຮັບຜິດຊອບສູງ, ບໍ່ສວຍໃຊ້ສິດອຳນາດຂອງຕົນ, ຮູ້ເສຍສະຫຼະຜົນປະໂຫຍດສ່ວນຕົວເພື່ອສ່ວນລວມ ເປັນຕົ້ນແມ່ນດ້ານສະຕິປັນຍາ, ເຫື່ອແຮງ ແລະ ເວລາ ເພື່ອໃຫ້ວຽກງານທີ່ໄດ້ຮັບມອບໝາຍສຳເລັດ. ເອົາໃຈໃສ່ ປັບປຸງ ແລະ ສ້າງບັນດານິຕິກຳໃຫ້ສົມບູນຂຶ້ນກວ່າເກົ່າ, ລະດົມສະມາຊິກ 3 ອົງການຈັດຕັ້ງມະຫາຊົນເຂົ້າຮ່ວມຂະບວນການຕ່າງໆ ຢ່າງເປັນປະຈຳ.

## ພາກທີII
## ທິດທາງແຜນການໃນຕໍ່ໜ້າ

### I. ວຽກງານການເມືອງແນວຄິດ

ສືບຕໍ່ນຳພາການເມືອງ-ແນວຄິດຂອງພະນັກງານໃຫ້ມີຄວາມສະຫງົບ ແລະ ເຊື່ອມຊຶມບັນດາແນວທາງຂອງພັກ-ລັດ, ຈັດຕັ້ງເຜີຍແຜ່ເອກະສານຕ່າງໆ ທີ່ຂັ້ນເທິງໄດ້ມອບໝາຍໃຫ້ພະນັກງານໄດ້ເຊື່ອມຊຶມ ແລະ ຈັດຕັ້ງຜັນຂະຫຍາຍເຂົ້າໃນວຽກງານຂອງຕົນ, ຊຸກຍູ້ສົ່ງເສີມໃຫ້ພະນັກງານເພີ່ມຄວາມເປັນເຈົ້າການໃນການປະຕິບັດໜ້າທີ່ວຽກງານຂອງຕົນ ດ້ວຍຄວາມຮັບຜິດຊອບສູງ, ປົກປັກຮັກສາຄວາມສາມັກຄີພາຍໃນ ແລະ ພາຍນອກເປັນຢ່າງດີ.

### II. ວຽກງານວິຊາສະເພາະ

1. ແຜນປະຕິບັດວຽກງານຈຸດສຸມໃນຕໍ່ໜ້າ

- ສືບຕໍ່ດຳເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນດັ່ງທີ່ໄດ້ກຳນົດໄວ້ໃນແຜນງານປະຈຳປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ; ຄົ້ນຄວ້າສ້າງແບບຈຳລອງເສດຖະກິດມະຫາພາກ ແລະ ອັດຕາແລກປ່ຽນ; ຊຸກຍູ້ການເຄື່ອນໄຫວຕະຫຼາດລະຫວ່າງທະນາຄານ; ສືບຕໍ່ຕິດຕາມສະພາບອັດຕາເງິນເຟີ້ ແລະ ຄວບຄຸມປັດໃຈຕ່າງໆ ທີ່ຈະກະທົບໃຫ້ເກີດເງິນເຟີ້ ເອົາໃຈໃສ່ບໍລິຫານຄັງສຳຮອງເງິນຕາຕ່າງປະເທດໃຫ້ມີປະສິດທິພາບ.

- ສືບຕໍ່ຄຸ້ມຄອງເງິນຕາຕ່າງປະເທດ, ສົ່ງເສີມການນຳໃຊ້ເງິນກີບ ແລະ ການຊຳລະໂດຍບໍ່ໃຊ້ເງິນສົດໂດຍໃນເດືອນຕໍ່ໄປຈະສືບຕໍ່ລົງກວດກາຕິດຕາມສະພາບການຕິດລາຄາສິນຄ້າ ແລະ ບໍລິການຂອງບັນດາຕະຫຼາດ, ຫ້າງຮ້ານຂາຍໃນນະຄອນຫຼວງວຽງຈັນ;

- ຊຸກຍູ້ບັນດາທະນາຄານທຸລະກິດເພີ່ມທະວີການລະດົມເງິນຝາກດ້ວຍຫຼາຍຮູບຫຼາຍສີ ໂດຍສະເພາະເງິນຝາກໄລຍະຍາວດ້ວຍການອອກພັນທະບັດ, ໃບຢັ້ງຢືນເງິນຝາກ, ສະຫຼາກປະຢັດ ແລະ ຮູບການອື່ນໆ ທີ່ເໝາະສົມສອດຄ່ອງກັບຄວາມຕ້ອງການຕົວຈິງຂອງສັງຄົມ ໄປຄຽງຄູ່ກັບການປັບປຸງການບໍລິການຂອງຕົນໃຫ້ມີຄວາມສະດວກວ່ອງໄວ ແລະ ທັນໄປຕາມຄວາມຕ້ອງການຂອງລູກຄ້າ. ຊຸກຍູ້ການປັບອັດຕາດອກເບ້ຍໃຫ້ສອດຄ່ອງກັບສະພາບການພາຍໃນ ແລະ ສາກົນ. ປະເມີນສິນເຊື່ອ ຄົ້ນຄວ້າ ແລະ ໃນການກັບການຄຸ້ມຄອງສິນເຊື່ອຂອງລະບົບທະນາຄານ ແລະ ສະຖາບັນການເງິນ ເພື່ອສ້າງເງື່ອນ

ໄຂໃຫ້ນໍາໃຊ້ທຶນຮອນໄດ້ຢ່າງເຕັມສ່ວນ; ເພີ່ມທະວີການຕິດຕາມກວດກາການເຄື່ອນໄຫວສິນເຊື່ອ ຂອງສະຖາບັນການເງິນອື່ນໆ ລວມທັງສະຖາບັນການເງິນຈຸລະພາກ, ສະຫະກອນສິນເຊື່ອ ໃຫ້ຖືກຕ້ອງຕາມລະບຽບການ; ຕິດຕາມການນໍາໃຊ້ສິນເຊື່ອຢ່າງໃກ້ຊິດ ແລະ ການປັບປຸງໂຄງສ້າງໜີ້ໃຫ້ແທດເໝາະ ເພື່ອຮັບປະກັນບໍ່ໃຫ້ເກີດໜີ້ບໍ່ເກີດດອກອອກຜົນເກີນ 3%;

- ສືບຕໍ່ຄົ້ນຄວ້າ ແລະ ປັບປຸງບັນດານິຕິກໍາທີ່ຕິດພັນກັບວຽກງານວິຊາສະເພາະຕ່າງໆ ໄດ້ແກ່: ❶ປັບປຸງຮ່າງກົດໝາຍ ເປັນຕົ້ນກົດໝາຍວ່າດ້ວຍການຕ້ານ ແລະ ສະກັດກັ້ນການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ (AML/CFT) ຮ່ວມກັບສະພາແຫ່ງຊາດ ແລະ ສືບຕໍ່ປັບປຸງຮ່າງກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ແລະ ວັດຖຸມີຄ່າ; ❷ປັບປຸງຮ່າງດໍາລັດ ເປັນຕົ້ນດໍາລັດວ່າດ້ວຍໂຮງຊວດຈໍາ, ຮ່າງດໍາລັດວ່າດ້ວຍລະບົບຊໍາລະສະສາງແຫ່ງຊາດ ແລະ ສືບຕໍ່ປັບປຸງເນື້ອໃນຮ່າງດໍາລັດວ່າດ້ວຍທຸລະກິດໃຫ້ເຊົ່າສິນເຊື່ອ; ❸ຕິດຕາມຮ່າງຂໍ້ຕົກລົງ ເປັນຕົ້ນຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງທະນາຄານແຫ່ງ ສປປ ລາວ, ເອກະສານສະເໜີຂໍສ້າງຕັ້ງ ທຫລ ສາຂາຊຽງຂວາງ ທີ່ໄດ້ສົ່ງໃຫ້ກະຊວງພາຍໃນ, ສືບຕໍ່ຜ່ານຮ່າງຂໍ້ຕົກລົງວ່າດ້ວຍການສ້າງຕັ້ງທະນາຄານທຸລະກິດ ແລະ ສາຂາທະນາຄານທຸລະກິດ, ຄົ້ນຄວ້າຮ່າງຂໍ້ຕົກລົງວ່າດ້ວຍການປັບປຸງ ແລະ ເພີ່ມເຕີມເນື້ອໃນບາງມາດຕາ ແລະ ຄໍາແນະນໍາເພີ່ມເຕີມຂໍ້ຕົກລົງວ່າດ້ວຍການຈັດຊັ້ນໜີ້ ແລະ ຫັກເງິນແຮສໍາລັບໜີ້ທີ່ຖືກຈັດຊັ້ນຂອງທະນາຄານທຸລະກິດ ສະບັບເລກທີ 324/ທຫລ; ❹ຄົ້ນຄວ້າຮ່າງລະບຽບເປັນຕົ້ນລະບຽບວ່າດ້ວຍການມອບຫຼັກຊັບຄໍ້າປະກັນຂອງລູກຄ້າເພື່ອຊໍາລະໜີ້ເງິນກູ້ແກ່ທະນາຄານ, ສືບຕໍ່ປັບປຸງຮ່າງລະບຽບວ່າດ້ວຍການຄຸ້ມຄອງຫຼັກຊັບ ແລະ ຮ່າງລະບຽບວ່າດ້ວຍການບັນຊີ-ການກວດສອບວຽກງານຫຼັກຊັບ, ສືບຕໍ່ປັບປຸງຮ່າງລະບຽບວ່າດ້ວຍລາຍການທີ່ກ່ຽວພັນ ຂອງບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບ ແລະ ສືບຕໍ່ປັບປຸງຮ່າງລະບຽບວ່າດ້ວຍການບໍລິການການເງິນຜ່ານໂທລະສັບມືຖື;

- ວຽກງານຕ້ານ ແລະ ສະກັດກັ້ນການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ: ❶ກະກຽມເຂົ້າຮ່ວມກອງປະຊຸມສໍາມະນາກ່ຽວກັບການຕ້ານອາຊະຍະກໍາປ່າໄມ້, ສັດນໍ້າ, ສັດປ່າ ແລະ ການຕ້ານການຟອກເງິນ ທີ່ແຂວງຈໍາປາສັກ; ❷ກະກຽມເຮັດວຽກກັບຜູ້ແທນລະດັບສູງຂອງກຸ່ມ APG; ❸ກະກຽມຄວາມພ້ອມຮອບດ້ານໃນການຈັດກອງປະຊຸມຄົ້ງປະຖົມມະລຶກ ຂອງຄະນະກໍາມະການແຫ່ງຊາດ ເພື່ອຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ (NCC);

- ສືບຕໍ່ພັດທະນາລະບົບໂປຣແກຣມຄັງສາງຂໍ້ມູນທາງການບັນຊີຂະແໜງການທະນາຄານ ເພື່ອອໍານວຍຄວາມສະດວກແກ່ບັນດາກົມ, ສາຂາຂອງ ທຫລ ເຂົ້ານໍາໃຊ້ຂໍ້ມູນທາງການບັນຊີຜ່ານລະບົບຄອມພິວເຕີ ຊ່ວຍໃຫ້ການຄຸ້ມຄອງທະນາຄານທຸລະກິດໄດ້ກວ້າງຂວາງຍິ່ງຂຶ້ນ;

- ສືບຕໍ່ຈັດຕັ້ງປະຕິບັດ ໂຄງການເຊື່ອມຕໍ່ ATM ລະຫວ່າງ ທຫລ ແລະ CDB; ຂະຫຍາຍໂຄງການ ATM Pools 3 ທະນາຄານ ຄື: ທະນາຄານ ລາວ-ຈີນ, ທະນາຄານ ມາຣູຮານເຈແປນ-ລາວ ແລະ ທະນາຄານ ເອສທີ;

- ຕິດຕາມການສະເໜີໃຫ້ການຊ່ວຍເຫຼືອທາງດ້ານວິຊາການຂອງສະຖານທູດອັງກິດ ປະຈໍາ ສປປ ລາວ ໃຫ້ກັບໜ່ວຍງານຂໍ້ມູນຕ້ານການຟອກເງິນ ໃນຫົວຂໍ້ "Financial Analysis";

- ສືບຕໍ່ປະສານ ແລະ ຕິດຕາມກັບພາກສ່ວນກ່ຽວຂ້ອງ ກ່ຽວກັບການຂໍຄວາມຊ່ວຍເຫຼືອດ້ານວິຊາການ ເພື່ອຫັນການຄຸ້ມຄອງທະນາຄານທຸລະກິດ ຕາມຫຼັກການ Basel II;

- ກະກຽມເຂົ້າຮ່ວມກອງປະຊຸມຄະນະກໍາມະການສ້າງຄວາມສາມາດ ເພື່ອການເຊື່ອມໂຍງການເງິນ-ເງິນຕາອາຊຽນ ຄັ້ງທີ 8 (SCCB) ແລະ ກອງປະຊຸມຄະນະກໍາມະການລະດັບສູງ ຄັ້ງທີ 9 (SLC) ທີ່ປະເທດໄທ;

- ສືບຕໍ່ເສີມຂະຫຍາຍສາຍພົວພັນຮ່ວມມືກັບສາກົນຜ່ານການຮ່ວມມືສອງຝ່າຍ, ຫຼາຍຝ່າຍ ແລະ ຮ່ວມມືກັບຂົງເຂດພາກພື້ນຢ່າງກວ້າງຂວາງ ແລະ ຮອບດ້ານ.

ຜູ້ວ່າການທະນາຄານແຫ່ງ ສປປ ລາວ

ດຣ. ສົມພາວ ໄຟສິດ

## ຕາຕະລາງຄັດຕິດບົດລາຍງານ

### ຕາຕະລາງ ທີ 1: ສະພາບອັດຕາແລກປ່ຽນພາຍໃນ

| ອັດຕາ | ເດືອນຜ່ານມາ 12/2014 | | | ເດືອນນີ້ 01/2015 | | | %(+)ເງິນກີບແຂງ/(-) ອ່ອນຄ່າ | | |
|---|---|---|---|---|---|---|---|---|---|
| +ໃນລະບົບ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ |
| ໂດລາ | 8,042.72 | 8,072.32 | 8,058.66 | 8,078.03 | 8,108.37 | 8,092.46 | -0.44% | -0.44% | -0.42% |
| ບາດ | 247.05 | 248.12 | 247.66 | 247.39 | 248.54 | 248.06 | -0.14% | -0.17% | -0.16% |
| +ນອກລະບົບ | | | | | | | | | |
| ໂດລາ | 8,073.50 | 8,106.74 | 8,090.12 | 8,098.14 | 8,146.68 | 8,122.41 | -0.30% | -0.49% | -0.40% |
| ບາດ | 251.17 | 252.77 | 251.97 | 249.40 | 251.28 | 250.35 | 0.71% | 0.59% | 0.65% |
| ຜິດດ່ຽງອັດຕາໃນລະບົບ ແລະນອກລະບົບ (%) | | | | | | | | | |
| -ໂດລາ | 0.38% | 0.43% | 0.39% | 0.25% | 0.47% | 0.37% | | | |
| -ບາດ | 1.67% | 1.87% | 1.74% | 0.81% | 1.10% | 0.92% | | | |

### ຕາຕະລາງ ທີ 2: ສະພາບການຊື້-ຂາຍເງິນຕາຕ່າງປະເທດ

| | ເດືອນ 12/2014 | | ເດືອນ 01/2015 | | | (%) +ເພີ່ມຂຶ້ນ/ -ຫລຸດລົງ | |
|---|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ທຽບເທົ່າໂດລາ | ໂດລາ | ບາດ |
| 1. ການຊື້ເງິນຕາຕ່າງປະເທດ | | | | | | | |
| - ທ/ຄ ທຸລະກິດລັດ | 158.06 | 785.79 | 94.93 | 916.04 | 123.02 | -39.94% | 16.58% |
| - ທ/ຄ ທຸລະກິດອື່ນໆ | 125.22 | 1,112.09 | 161.23 | 607.10 | 179.85 | 28.76% | -45.41% |
| ລວມຊື້: | **283.28** | **1,897.87** | **256.16** | **1,523.14** | **302.87** | **-9.57%** | **-19.74%** |
| 2. ການຂາຍເງິນຕາຕ່າງປະເທດ | | | | | | | |
| - ທ/ຄທຸລະກິດລັດ | 133.81 | 929.85 | 91.39 | 910.71 | 119.32 | -31.70% | -2.06% |
| - ທ/ຄທຸລະກິດອື່ນໆ | 218.81 | 2,475.88 | 133.21 | 1,419.98 | 176.76 | -39.12% | -42.65% |
| ລວມຂາຍ: | **352.63** | **3,405.73** | **224.61** | **2,330.70** | **296.08** | **-36.31%** | **-31.57%** |
| ທທກ ຊື້-ຂາຍສຸດທິ | -69.35 | -1,507.85 | 31.56 | -807.55 | 6.79 | -145.51% | -46.44% |
| % ຜິດດ່ຽງຊື້-ຂາຍ | -24.48 | -79.45 | 12.32 | -53.02 | 2.24 | 368.02% | 264.07% |
| ມູນຄ່າການຊື້-ຂາຍ | **635.91** | **5,303.60** | **480.77** | **3,853.84** | **598.95** | **-24.40%** | **-27.34%** |
| 3. ຊື້-ຂາຍ ລະຫວ່າງ ທຫລ ກັບ ທທກ | | | | | | | |
| - ທຫລ ຊື້ຈາກ ທທກ | 2.04 | 33.50 | 28.60 | 242.00 | 36.02 | 130.41% | 622.39% |
| - ທຫລ ຂາຍໃຫ້ ທທກ | 47.38 | 531.00 | 27.80 | 119.99 | 31.48 | -41.34% | -77.40% |
| ທຫລ ຊື້-ຂາຍສຸດທິ | -45.35 | -497.50 | 0.80 | 122.01 | 4.54 | -101.77% | -124.52% |
| 4. ຊື້-ຂາຍ ລະຫວ່າງ ທທກ ດ້ວຍກັນ | 33.41 | 336.26 | 44.14 | 307.18 | 53.56 | 32.14% | -8.38% |
| 5. ຊື້-ຂາຍ ລະຫວ່າງ ທຫລ ກັບພາກສ່ວນອື່ນ (ກະຊວງການເງິນ ແລະ ຮ້ານແລກປ່ຽນເງິນຕາ) | | | | | | | |
| - ທຫລ ຊື້ຈາກພາກສ່ວນອື່ນ | 13.1[illegible] | 1,26[illegible].82 | 10.19 | 645.58 | 29.99 | -22.28% | -46.[illegible]3% |
| - ທຫລ ຂາຍໃຫ້ພາກສ່ວນອື່ນ | 29.02 | 0.00 | 20.79 | 14.98 | 21.24 | -28.37% | 0.00% |
| ທຫລ ຊື້-ຂາຍສຸດທິ | -15.90 | 1,2[illegible].82 | -10.60 | 630.60 | 8.74 | -33.38% | -47.[illegible]% |